ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ

ສະພາຄຸ້ມຄອງວິຊາຊີບສາທາລະນະສຸກ

ເລກທີ 153 /ສວສ

ນະຄອນຫຼວງວຽງຈັນ, ວັນທີ 02 SEP 2026

# ແຈ້ງການ

ເຖິງ: - ທ່ານ ອະທິການບໍດີ ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ

- ທ່ານ ອຳນວຍການວິທະຍາຄານການແພດກອງທັບ
- ຜູ້ທີ່ສົນໃຈຕ້ອງການສະໝັກສອບເສັງລະດັບຊາດສຳລັບທ່ານໝໍ

ເລື່ອງ: ການກະກຽມ ແລະ ຈັດຕັ້ງສອບເສັງລະດັບຊາດສຳລັບທ່ານໝໍ ຄັ້ງທີ 6.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ເລກທີ 1932/ສທ, ລົງວັນທີ 17 ກໍລະກົດ 2024;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການອະນຸມັດຈັດການສອບເສັງລະດັບຊາດ ເພື່ອເອົາໃບປະກອບວິຊາຊີບທ່ານໝໍ ສຳລັບທ່ານໝໍປິ່ນປົວທົ່ວໄປຂອງ ຄະນະກຳມະການວິຊາຊີບ ທ່ານໝໍ ຄັ້ງທີ 6, ເລກທີ 150/ສວສ, ລົງວັນທີ 02 ກັນຍາ 2026;

ສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ຈະຈັດການສອບເສັງລະດັບຊາດສຳລັບທ່ານໝໍ ຄັ້ງທີ 6, ຊຶ່ງຈະຈັດຂຶ້ນໃນວັນທີ 8 ຫາ 9 ຕຸລາ 2026 ທີ່ ວິທະຍາເຂດດົງໂດກ ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ. ດັ່ງນັ້ນ , ຈຶ່ງຂໍແຈ້ງໃຫ້ທ່ານໝໍຈົບໃໝ່ທັງພາຍໃນ, ຕ່າງປະເທດ, ຜູ້ທີ່ບໍ່ທັນໄດ້ສອບເສັງ ແລະ ຜູ້ທີ່ສອບເສັງບໍ່ຜ່ານ, ທີ່ຮຽນຈົບຫລັງປີ 2020 ເປັນຕົ້ນມາ ມາລົງທະບຽນ ແລະ ເຂົ້າຮ່ວມການສອບເສັງຕາມວັນເວລາ ແລະ ສະຖານທີ່ທີ່ກຳນົດໄວ້ ໃຫ້ສະໝັກສອບເສັງຊຶ່ງມີລາຍລະອຽດດັ່ງນີ້:

1. ຮັບແບບຟອມຄຳຮ້ອງສະໝັກສອບເສັງທາງອອນລາຍໄດ້ທີ່: https://hpc.gov.la/la/doctor/examination ຫຼື ທີ່ຕຶກສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ຊັ້ນ 1 (ໃນຮົ້ວກະຊວງສາທາລະນະສຸກຕຶກໃໝ່);
2. ຜູ້ທີ່ສະໝັກສອບເສັງຈະຕ້ອງຂຽນຟອມສະໝັກສອບເສັງ ແລະ ລົງທະບຽນອອນລາຍຜ່ານ QRcode ທີ່ມີຢູ່ໃນທ້າຍແບບຟອມ (ຖ້າບໍ່ລົງທະບຽນອອນລາຍຈະບໍ່ມີລາຍຊື່ສອບເສັງ):
3. ສົ່ງຟອມຄຳຮ້ອງສະໝັກສອບເສັງໄດ້ທີ່ ຕຶກສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ຊັ້ນ 1 (ໃນຮົ້ວກະຊວງສາທາລະນະສຸກຕຶກໃໝ່) ແຕ່ວັນທີ 3 ຫາ 25 ກັນຍາ 2026;
4. ຄ່າລົງທະບຽນສະໝັກສອບເສັງແມ່ນ 350,000 ກີບ/ຄົນ ຊຶ່ງຈະຕ້ອງຈ່າຍຕອນທີ່ສົ່ງຟອມຄຳຮ້ອງສະໝັກສອບເສັງ.

5. ກ່ອນມື້ສອບເສັງຕ້ອງກຽມອຸປະກອນຮັບໃຊ້ຢ່າງພຽງພໍ ເຊັ່ນ: ສໍດຳ 2B, ຢາງລຶບ ແລະ ອຸປະກອນ ແຫຼມສໍ.

ເຊັນແທນ ປະທານ

ສຈ ດຣ ຈັນເພັງ ທຳມະວົງ

<u>ຕິດຕໍ່ຜູ້ປະສານງານ ໂທ ແລະ ວອດ;</u>


ເລກ ສີດາວົງ 5500 8875

ບຸນປະສິດ ຄຳກອງ 5986 8071

ຕົ້ນ ບຸຜາ 9539 6733